| ຊະນິດຢາວັກຊິນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
| --- | --- | --- | --- |
| ♦ ຢາວັກຊິນ ອະຫິວາສັດປີກ | ♦ ໃຊ້ກັບສັດປີກທົ່ວໄປ<br>♦ ສັດ ອາຍຸ 6 ອາທິດຂຶ້ນໄປ. | ♦ ສັກ 1 ມລ (ສັກຫຼືບໜັງ) | 3 ເດືອນ |

ຕາຕະລາງ : ການນຳໃຊ້ຢາວັກຊິນ ອະຫິວາສັກປີກ

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ສະໜັບສະໜູນການຈັດພິມໂດຍໂຄງການ:
FWC BENEFICIARIES 2013–LOT 1 RURAL DEVELOPMENT AND FOOD SECURITY,
Specific Contract DCI-ASIE/2014/354910

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການນຳໃຊ້ຢາ
# ວັກຊິນອະຫິວາສັກປີກ




ຄັດຈາກ: ປຶ້ມຄູ່ມືການນຳໃຊ້ວັກຊິນສຳລັບສັດ (1997)

ຮຽບຮຽງໂດຍ :
ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (*CETDU*)

ສະໜັບສະໜູນໂດຍ :
ໂຄງການ ສົ່ງເສີມ ກະສິກຳ (*LEAP*)

# ວັກຊີນ ອະຫິວາສັດປີກ

## ນິຍາມ:

ວັກຊີນຊະນິດນີ້ ປຸງແຕ່ງມາຈາກເຊື້ອ ພັນ PASTEURELLA MULTOCIDA AVIN ໃນພູມປູກນ້ຳຊີ້ນ ແລະ ຂ້າເຊື້ອດ້ວຍຟອກໂມນ, ເປັນວັກຊີນເຊື້ອຕາຍຊະນິດນ້ຳ ປະສົມກັບ ອາລູຍມີນຽມ ໂປຕາສຊອນຊັນເຟດ. Aluminum Potassium Sulphate ເປັນສານເສີມພະລັງ.




## ລັກສະນະອາການ

ໄກ່ຕາຍກະທັນຫັນ ໂດຍບໍ່ມີປະກົດການຂອງພະຍາດ. ສັງເກດເບິ່ງໜ້າສີດຳຊ້ຳ ສະເພາະໂຕຕາຍແລ້ວ.

*ຂໍ້ທີ່ສັງເກດ:* ເມື່ອມີອະຫິວາເກີດຂຶ້ນ ຈະມີທັງໄກ່, ເປັດ, ໄກ່ງວງ , ຫ່ານ, ຕາຍພ້ອມໆກັນ. ເປີເຊັນການຕາຍ 30 ຫາ 50 % .

## ຂໍ້ແນະນຳ

ໃຊ້ປ້ອງກັນພະຍາດອະຫິວາສັດປີກ ແກ່ສັດປີກທົ່ວໄປ.

## ວິທີໃຊ້

ສັ່ນໃຫ້ລະລາຍດີກ່ອນໃຊ້



- ສັດປີກ ອາຍຸ 6 ອາທິດຂຶ້ນໄປສັກ 1 ມລ ຫຼືບໜັງ.
- ຫຼັງຈາກສັກຢາຈະມີອາການໄຂ່ເລັກນ້ອຍ. ຕາມບໍລິເວນສັກ ພາຍໃນລະຍະ 2—3 ມື້.



ຮູບ: ການສັກຫຼືບໜັງ



## ໄລຍະຄຸ້ມກັນ

ສັດຈະມີຄວາມຄຸ້ມກັນ ຫຼັງຈາກສັກຢາໄດ້ 2 ອາທິດ ແລະ ຈະຄຸ້ມກັນພະຍາດອະຫິວາສັດປີກໄດ້ 3 ເດືອນ.

## ການເກັບຮັກສາ

ຮັກສາໃນອຸນນະພູມ 4 ອົງສາ ກຸ້ມໄດ້ 1 ປີ. ເວລາຂົນຍ້າຍວັກຊີນ ຫຼີກເວັ້ນບໍ່ໃຫ້ຖືກແສງແດດ. ແລະ ອຸນນະພູມອົບເອົ້າເກີນໄປ.

## ແກ້ວບັນຈຸ

ແກ້ວໜຶ່ງບັນຈຸ 50 ມລ / 50 ເຂັມ.